*ສັງຄົມແຫ່ງການຮຽນຮູ້*

*Gateway to the Knowledge Society*

# ນະໂຍບາຍການພັດທະນາການສະສົມຂໍ້ມູນ

December 15

# CONTENTS


ນະໂຍບາຍການພັດທະນາການສະສົມຂໍ້ມູນ ..... 1

ພາກແນະນຳ ..... 4

ພາລະກິດຂອງຫໍສະໝຸດແຫ່ງຊາດ ..... 4

ຈຸດປະສົງຍຸດທະສາດໃນການພັດທະນາການສະສົມຂໍ້ມູນຂອງຫໍສະໝຸດແຫ່ງຊາດ ..... 4

ເຈດຕະນາ ..... 4

ແນວທາງໃນການເລືອກ ..... 5

ມາດຕະການໃນການເລືອກ ..... 5

ການມອບໂອນທີ່ຖືກກົດໝາຍ ..... 6

ການບໍລິຈາກ ..... 6

ການຊື້ ..... 6

ເອກະສານທີ່ມີເນື້ອຫາລະອຽດອ່ອນ ..... 7

ການຖອນເອກະສານອອກ ..... 7

ເອກະສານສິ່ງພິມທີ່ບໍ່ຄວນຖືກຖອດຖອນ: ..... 7

ອຸປະກອນສິ່ງພິມທີ່ອາດຖືກຖອນອອກ: ..... 7

ວິທີການກຳຈັດ ..... 8

ການເກັບສະສົມທີ່ເປັນຮູບປະທຳ ..... 8

ການເກັບສະສົມພາສາລາວ ..... 8

ການເກັບສະສົມເອກະສາຍອ້າງອີງ ..... 9

ການເກັບສະສົມພາສາຕ່າງເທດ ..... 9

ການເກັບສະສົມໜັງສືພິມແລະບົດຂຽນດ້ານວິຊາການ ..... 9

ການເກັບສະສົມສຳລັບເດັກ ..... 9

ການເກັບສະສົມໜັງສືຜູກໃບລານ ..... 10

ການເກັບສະສົມດົນຕີພື້ນເມືອງ ..... 10

ການເກັບສະສົມປຶ້ມສະໃໝອິນດູຈີນທີ່ຫາຍາກ ..... 10

ການເກັບສະສົມແຜນທີ່ ..... 11

ການເກັບສະສົມຂອງອາຊຽນ ..... 11

ການເກັບສະສົມແບບດິຈິຕໍ......11
ຫໍສະໝຸດດິຈິຕໍຂອງໜັງສືຜູກໃບລານເປັນພາສາລາວ - DLLM......12
ດົນຕີພື້ນເມືອງ......12
ປື້ມອິນໂດຈີນທີ່ຫາຍາກ......12
ບູລິມະສິດຂອງການເກັບສະສົມໃນອານາຄົດ......13
ຄວາມເປັນມາຂອງເອກະສານແລະການຄຸ້ມຄອງ......13

# ພາກແນະນຳ

## ພາລະກິດຂອງຫໍສະໝຸດແຫ່ງຊາດ

"ຫໍສະໝຸດແຫ່ງຊາດລາວມີໜ້າທີ່ເກັບຮັກສາມໍລະດົກທາງວັດທະນະທຳຂອງຊາດ, ເຊີດຊູການພັດທະນາການອ່ານ; ແລະ ສົ່ງເສີມຄວາມເປັນເລີດຂອງອົງການເພື່ອຈະກໍ່ສ້າງສັງຄົມແຫ່ງການຮຽນຮູ້ສຳລັບປະຊາຊົນລາວ" .

- ພາລະກິດຂອງຫໍສະໝຸດແຫ່ງຊາດ, 2015

## ຈຸດປະສົງຍຸດທະສາດໃນການພັດທະນາການສະສົມຂໍ້ມູນຂອງຫໍສະໝຸດແຫ່ງຊາດ

- ຈຸດປະສົງ 1: ຊອກໃຫ້ໄດ້ມາ, ເກັບຮັກສາແລະສ້າງຄວາມຮູ້

ກໍ່ສ້າງການສະສົມຂໍ້ມູນຂອງ ຫສຊ ເຊິ່ງ:

i. ສະທ້ອນແລະເກັບຮັກສາປະຫວັດສາດ, ວັດທະນະທຳແລະສັງຄົມລາວ
ii. ບອກໃຫ້ຄົນລາວແລະຊາວຕ່າງປະເທດໃຫ້ຮູ້ກ່ຽວກັບປະຫວັດສາດ, ວັດທະນະທຳແລະສັງຄົມລາວໃຫ້ດີກວ່າເກົ່າ.
iii. ສົ່ງເສີມການມີສ່ວນຮ່ວມໃນສັງຄົມຂອງຄົນລາວທຸກຖ້ວນໜ້າ,
iv. ສົ່ງເສີມວັດຕະກຳແລະຮູບແບບໃໝ່ຂອງຄວາມຄິດສ້າງສັນ; ແລະ
v. ລວມເອົາຄວາມຮູ້ແລະພູມປັນຍາທ້ອງຖິ່ນ.

- ຈຸດປະສົງ 2: ປັບປຸງການເຂົ້າເຖິງ ຫສຊ ໃຫ້ແກ່ມວນຊົນ

ປັບປຸງການເຂົ້າເຖິງການສະສົມຂໍ້ມູນແລະການບໍລິການໃຫ້ແກ່ມວນຊົນລວມເຖິງໂດຍນຳໃຊ້ "ຫໍສະໝຸດດີຈີຕໍ" ເພື່ອ:

i. ໃຫ້ຄວາມສາມາດໃນການເຂົ້າເຖິງຂໍ້ມູນອອນລາຍຢ່າງເທົ່າທຽມກັນແລະກວ້າງຂວາງ
ii. ປັບປຸງເສດຖະກິດ, ການສຶກສາ, ສຸຂະພາບແລະຊີວິດການເປັນຢູ່ທົ່ວສັງຄົມຂອງປະຊາຊົນ, ລວມທັງກຸ່ມຊົນຊາດຊົນເຜົ່າທຸກຖ້ວນໜ້າ.
iii. ສົ່ງເສີມການພົວພັນທັງພາກພື້ນແລະສາກົນໃຫ້ເລິກເຊິ່ງກວ່າເກົ່າ
iv. ສົ່ງເສີມການຮຽນຮູ້ຕະຫຼອດຊີວິດແລະການພັດທະນາສັງຄົມທີ່ມີຄວາມຮູ້

## ເຈດຕະນາ

ເຈດຕະນາຕົ້ນຕໍຂອງນະໂຍບາຍພັດທະນາການສະສົມຂໍ້ມູນນີ້ແມ່ນເພື່ອ:

- ສະໜັບສະໜຸນພາລະກິດແລະຈຸດປະສົງຂອງ ຫສຊ ຕາມທີ່ກຳໜົດໄວ້ໃນຈຸດປະສົງຍຸດທະສາດຂອງ ຫສຊ

- ສະໜອງແນວທາງໃຫ້ແກ່ພະນັກງານຂອງ ຫສຊ ເພື່ອການຈັດຕັ້ງປະຕິບັດຂະບວນການແລະຂັ້ນຕອນຕ່າງໆທີ່ກ່ຽວຂ້ອງກັບການພັດທະນາແລະຄຸ້ມຄອງຂໍ້ມູນສະສົມຂອງຫໍສະໝຸດ
- ສະໜອງພາບລວມຂອງຫຼັກການທີ່ຢູ່ເບື້ອງຫຼັງຂອງການຕັດສິນໃຈໂດຍ ຫສຊ ກ່ຽວພັນກັບການຊອກຫາ, ການເກັບຮັກສາ, ການເຂົ້າເຖິງ ແລະ ຖອດຖອນເອົາຂໍ້ມູນທີ່ສະເພາະເຈາະຈົງ

## ແນວທາງໃນການເລືອກ

ຫໍສະໝຸດແຫ່ງຊາດມີໜ້າທີ່ຮັບຜິດຊອບທີ່ໂດດເດັ່ນເພື່ອເກັບກຳການບັນທຶກທາງດ້ານປະຫວັດສາດແລະວັດທະນະທຳຂອງລາວ. ສິ່ງນີ້ລວມມີແຫຼ່ງຂໍ້ມູນຂອງເອກະສານແລະໜັງສືພິມວາລະສານຕ່າງໆ; ສື່ດ້ານສຽງແລະຮູບພາບ; ໄມໂຄຼຟິມ, ໄມໂຄຼຟິຊ໌, ໜັງສືຂຽນຕົ້ນສະບັບ,  ແຜນທີ່, ດົນຕີ, ອຸປະກອນການສຶກສາ, ຮູບຖ່າຍ, ຮູບພາບ, ບັດໂຄສະນາຕ່າງໆ ຈົນເຖິງສະຖານທີ່ເກັບຮັກສາເອກະສານແລະບັດບັນທຶກຂອງກະຊວງຕ່າງໆໃນລັດຖະບານ.

ຫໍສະໝຸດຍັງມີໜ້າທີ່ພິເສດໃນການຕອບສະໜອງຄວາມຕ້ອງການດ້ານຂໍ້ມູນຂອງຜູ້ນຳໃຊ້ໃນຂອບເຂດທີ່ບໍ່ກ່ຽວຂ້ອງກັບລາວແລະພາສາລາວ.  ໃນຂະນະທີ່ຈຳນວນວັດສະດຸທີ່ຖືກພິມໃນລາວຍັງຄົງມີໜ້ອຍ, ຫໍສະໝຸດຍັງຮັກສາການສະສົມປຶ້ມຕ່າງເທດໄວ້ຢ່າງຫຼວງຫຼາຍເຊິ່ງລວມມີ:  ພາສາຫວຽດນາມ, ໄທ, ຝຣັ່ງ, ອັງກິດ, ລັດເຊຍ, ເກົາຫຼີ ແລະ ຍີ່ປຸ່ນ.  ໃນຂະນະທີ່ການເລັງໃສ່ພາສາອັງກິດເຊິ່ງເປັນ “ພາສາກາງ” ຂອງໂລກຍັງຄົງເສີບຕໍ່ຂະຫຍາຍຕົວ, ເປັນທີ່ຄາດຫວັງວ່າ ຫສຊ ຈະຍິ່ງຄົງສຸມໃສ່ການຊອກຫາແຫຼ່ງຂໍ້ມູນຂອງການສະສົມພາສາອັງກິດເພື່ອສະໜອງຄວາມຕ້ອງການຂອງຜູ້ຊົມໃຊ້ໃຫ້ດີກວ່າເກົ່າ.

ທຸກໆລາຍການທີ່ເປັນຮູບປະທຳສົ່ງຜົນໃຫ້ຂະບວນການທຳງານແລະສະໜອງພື້ນທີ່ໃນການເກັບຮັກສາທີ່ຫໍສະໝຸດແລະອາດຮວມເອົາວຽກງານການອະນຸລັກອີກ. ຫໍສະໝຸດແຫ່ງຊາດມີປະຫວັດອັນຍາວນານໃນການຮັບເອົາການບໍລິຈາກຈາກຫຼາຍແຫຼ່ງໂດຍບໍ່ມີນະໂຍບາຍການພັດທະນາການເກັບສະສົມກະກຽມໄວ້. ສິ່ງນີ້ສົ່ງຜົນໃຫ້ການເກັບສະສົມທີ່ລ້າສະໃໝຢູ່ແລ້ວບໍມີຄວາມກ່ຽວຂ້ອງ, ບໍ່ສອດຄ່ອງຄວາມຕ້ອງການຂອງຜູ້ຊົມໃຊ້ແລະມີລາຄາແພງທີ່ຈະເກັບຮັກສາ.  ຄາດວ່າການຍົກຍ້າຍໄປອາຄານຫໍສະໝຸດຫຼັງໃໝ່ໃນປີ 2016 ຈະສະໜອງໂອກາດໃຫ້ ຫສຊ ເພື່ອແກ້ໄຂບັນຫາການໃນພະແໜກ ການຖອດຖອນອຸປະກອນການພິມ ຄືດັ່ງໄດ້ກຳນົດໄວ້ໃນເອກະສານນະໂຍບາຍສະບັບນີ້.

ຫສຊ ມີຄວາມຕັ້ງໃຈທີ່ຈະປັບປຸງການເຂົ້າເຖິງຂໍ້ມູນຂ່າວສານສຳລັບທຸກໆຄົນ.  ດ້ວຍເຫດນີ້, ຮູບແບບຂອງສ່ວນປະກອບຈຶ່ງຖືເປັນສິ່ງສຳຄັນໃນການຍອມຮັບພ້ອມທັງສຸມໃສການເຮັດໃຫ້ການເຂົ້າເຖິງແຫຼ່ງຂໍ້ມູນຫຼາຍຂຶ້ນສຳລັບຜູ້ຊົມໃຊ້ໂດຍຜ່ານ *“ຫໍສະໝຸດດິຈິຕໍ”*.

### ມາດຕະການໃນການເລືອກ

ການສະສົມແມ່ນການຄົ້ນພົບຂອງ ຫສຊ ໂດຍການມອບທີ່ຖືກກົດໝາຍ, ບໍລິຈາກ (ບຸກຄົນທົ່ວໄປ, ທຸລະກິດ, ອົງການ ແລະຂອງຂວັນດ້ານວັດທະນະທຳ) ແລະ ການຊື້. ການຄົ້ນພົບແຫຼ່ງຂໍ້ມູນທີ່ບໍ່ສຳຄັນແລະຊ້ຳຊ້ອນຈະໄດ້ຮັບການຫຼີກເວັ້ນ.

ດັ່ງທີ່ເປັນຫຼັກການທົ່ວໄປວ່າການຄົ້ນພົບໃໝ່ຈະໄດ້ຮັບການຕີລາຄາພາຍໄຕ້ການພິຈາລະນາເພື່ອ:

- ໃຫ້ສອດຄ່ອງກັບພາລະໜ້າທີ່ແລະຈຸດປະສົງຍຸດທະສາດຂອງຫໍສະໝຸດ

- ນຳສະເໜີຄວາມສຳພັນແລະຊຸ້ນສ່ວນຮ່ວມມືຂັ້ນພາກພື້ນແລະສາກົນ - ອາຊຽນ
- ໃຫ້ມີຄວາມຖືກຕ້ອງແລະມີຄຸນນະພາບ
- ໃຫ້ມີລະດັບທີ່ເໝາະສົມຂອງປະລິມານ
- ມີຄວາມຄາດຫວັງໃນການນຳໃຊ້
- ຮູບແບບ
- ອາຍຸຂອງສິ່ງພິມ: ສະບັບຫຼ້າສຸດນອກຈາກຕ້ອງການເພື່ອການຄົ້ນຄວ້າ.
- ມີມູນຄ່າທີ່ສົມເຫດສົມຜົນລວມທັງມູນຄ່າການບໍລິຫານແລະການບຳລຸງຮັກສາ.

## ການມອບໂອນທີ່ຖືກກົດໝາຍ

ກົດໝາຍວ່າດ້ວຍການມອບໂອນທີ່ຖືກກົດໝາຍໄດ້ຮັບການນຳໃຊ້ຕັ້ງແຕ່ປີ 2012 ແລະ ໄດ້ກ່າວໄວ້ໃນມາດຕາ 17 ຂອງກົດໝາຍຫໍສະໝຸດລາວ (ເບິ່ງເອກະສານເພີ່ມເຕີມ A). ສິ່ງນີ້ຮຽກຮ້ອງບຸກຄົນ, ນິຕິບຸກຄົນແລະອົງການຕ່າງໆທຸກຖ້ວນໜ້າໃຫ້ມອບອຸປະກອນການພິມ 3 ຢ່າງຫຼືຫຼາຍກວ່ານັ້ນໃຫ້ແກ່ຫ້ອງສະໝຸດ.

ປະຈຸບັນນີ້ຍັງບໍ່ມີແຜນທີ່ຈະຂະຫຍາຍນິຕິບັນຍັດການມອບໂອນໃນປະເທດນີ້ເພື່ອລວມເອົາແຫຼ່ງສິ່ງພິມດີຈີຕໍໃນອິນເຕີແນັດ.

## ການບໍລິຈາກ

ປະຈຸບັນນີ້ ຫສຊ ຮັບການບໍລິຈາກບົນພື້ນຖານການກ່ຽວຂ້ອງກັບຈຸດປະສົງຂອງ ຫສຊ ແລະ ແນວທາງການຄັດເລືອກ. ຫສຊ ຮັກສາສິດໃນການປະຕິເສດເອກະສານບໍລິຈາກທີ່ບໍ່ສອດຄ່ອງກັບແນວທາງການຄັດເລືອກ.

ໃນຖານະທີ່ເປັນສະຖາບັນໜ່ວຍຄວາມຈຳຊັ້ນນຳຂອງປະເທດ, ຫສຊ ມີບົດບາດເປັນພື້ນທີ່ໃນການເກັບຮວບຮວມແລະເກັບຮັກສາຂໍ້ມູນສຳລັບການເກັບຮັກສາເອກະສານແລະການບັນທຶກຂອງບັນດາກະຊວງຕ່າງໆໃນລັດຖະບານ. ເປັນນະໂຍບາຍຂອງລັດຖະບານສຳລັບຫໍສະໝຸດແຫ່ງຊາດທີ່ຈະມີບົດບາດເປັນສະຖານທີ່ເກັບກຳເອກະສານທຸກສະບັບຂອງອົງການລັດຖະບານ. ຫໍສະໝຸດໄດ້ຮັບປຶ້ມ, ສິ່ງພິມ, ບົດຄວາມແລະເອກະສານຕ່າງໆຈາກບັນດາກົມໃນລັດຖະບານພາຍໃຕ້ບົດບາດໜ້າທີ່ຂອງການເປັນພື້ນທີ່ເກັບຮັກສາຂອງລັດຖະບານ. ຫໍສະໝຸດຈະທົບທວນເອກະສານແລະເກັບມ້ຽນສິ່ງທີ່ຄັດເລືອກໄວ້ເພື່ອຈຸດປະສົງທາງປະຫວັດສາດ.

## ການຊື້

ຫສຊ ເປັນອົງການລັດຖະບານດັ່ງນັ້ນຈຶ່ງໄດ້ຮັບເງິນສະໜັບສະໜູນຈາກລັດຖະບານລາວ. ຫໍສະໝຸດລາຍງານຕໍ່ກົມການພິມເຊິ່ງກໍ່ຢູ່ພາຍໃຕ້ກະຊວງຖະແຫຼງຂ່າວ, ວັດທະນະທຳແລະທ່ອງທ່ຽວ.

ງົບປະມານການຊື້ຂອງຫໍສະໝຸດແມ່ນຈຳກັດທີ່ສຸດແລະປ່ຽນແປງໄປແຕ່ລະປີ.

### ເອກະສານທີ່ມີເນື້ອຫາລະອຽດອ່ອນ

ໃນມາດຕາ 36 ຂອງກົດໝາຍວ່າດ້ວຍຫ້ອງສະໝຸດໄດ້ເກືອດຫ້າມບໍ່ໃຫ້ມີການຊື້ເອກະສານທີ່ມີເນື້ອຫາລະອຽດອ່ອນເຊິ່ງຕ້ານກັບທິດທາງ, ນະໂຍບາຍ, ສັນຕິພາບແລະກົດໝານການບໍລິການມອບຊີນ. ແຕ່ຫໍສະໝຸດສາມາດຮັກສາລາຍການພິເສດທີ່ໄດ້ຮັບປະນຸຍາດເພື່ອຈຸດປະສົງໃນການຄົ້ນຄວ້າໃນຫ້ອງອ່ານທີ່ຈັດໄວ້ພິເສດ.

## ການຖອນເອກະສານອອກ

ເນື່ອງຈາກຄວາມຈໍາກັດຂອງພະນັກງານ, ສາງແລະທຶນຮອນ, ຫໍສະໝຸດແຫ່ງຊາດຕ້ອງຮັບປະກັນວ່າແຫຼ່ງທຶນຕ້ອງມີພ້ອມໄວ້ໃຫ້ເອກະສານບູລິມະສິດໃນການເກັບສະສົມຂອງຫ້ອງສະໝຸດເອງ. ເອກະສານເຫຼົ່ານີ້ລວມມີເອກະສານທີ່ສະທ້ອນມູນມໍລະດົກທາງວັດທະນະທໍາ, ປະຊາຊົນແລະປະຫວັດສາດຂອງລາວ.

ມັນເປັນສິ່ງຈໍາເປັນເຊັ່ນກັນສໍາລັບ ຫສຊ ທີ່ຈະຮັກສາໂຄງການຕໍ່ເນື່ອງຂອງການຖອນເອກະສານທີ່ມີຄຸນຄ່າດ້ານຂໍ້ມູນໜ້ອຍຫຼືບໍ່ມີເລີຍສໍາລັບຫໍສະໝຸດແລະຜູ້ຊົມໃຊ້ແລະພັດມີມູນຄ່າການເກັບຮັກສາສູງ.

ການເກັບສະສົມເອກະສານຂໍ້ມູນອ້າງອີງທີ່ມີຫຼາຍສະບັບຫຼືທີ່ເປັນຫົວຂໍ້ບໍ່ຄົບຖ້ວນທີ່ໄດ້ມາຈາກການບໍລິຈາກຫຼືໂຄງການແລກປ່ຽນໃນອາດີດແລະມີຄຸນຄ່າໜ້ອຍຫຼືບໍ່ມີຄຸນຄ່າດ້ານຂໍ້ມູນຫຍັງເລີຍແລະກິນເນື້ອທີ່ການເກັບຮັກສາ. ເອກະສານສະສົມເຫຼົ່ານີ້ສາມາດຖອນອອກໄດ້ຢ່າງເປັນປົກກະຕິ.

ເອກະສານສິ່ງພິມທີ່ບໍລິຈາກເຊິ່ງບໍ່ສາມາດຄຸ້ມຄອງການເກັບຮັກສາຕາມຄວາມຄາດໝາຍແລະໃນປະຈຸບັນແມ່ນບໍ່ຢູ່ໃນຂອບເຂດນະໂຍບາຍການພັດທະນາການເກັບສະສົມຈະຖືກຖອນອອກ.

### ເອກະສານສິ່ງພິມທີ່ບໍ່ຄວນຖືກຖອດຖອນ:

- ລາຍການທີ່ໄດ້ຮັບມາໂດຍຜ່ານການມອບໂອນທີ່ຖືກຕາມກົດໝາຍ
- ລາຍການທັງໝົດກ່ຽວກັບລາວຫຼືທີ່ຖືປັນສິ່ງສໍາຄັນຕໍ່ປະຊາຊົນລາວ, ມູນມໍລະດົກທາງປະຫວັດສາດຫຼືວັດທະນະທໍາ
- ເອກະສານສິ່ງພິມທີ່ຍັງຄົງມີຂໍ້ມູນທີ່ສໍາຄັນແລະຍັງບໍ່ພ້ອມທີ່ຈະເຂົ້າເຖິງດ້ວຍທາງອື່ນ, ສະໜອງສາງເກັບມ້ຽນແລະຮັກສາທີ່ສາມາດຄຸ້ມຄອງໄດ້
- ເອກະສານສິ່ງພິມທີ່ບໍ່ມີຢູ່ບ່ອນອື່ນໃນລາວເຊິ່ງມີບາງຄຸນຄ່າທາງຂໍ້ມູນແລະການເກັບຮັກສາສາມາດເປັນໄປໄດ້.

### ອຸປະກອນສິ່ງພິມທີ່ອາດຖືກຖອນອອກ:

- ສໍາເນົາຊໍ້າຊ້ອນ
- ໜັງສືພິມທີ່ລ້າສະໄໝແລະບໍ່ແມ່ນພາສາລາວເມື່ອມີສິ່ງອື່ນທີ່ງ່າຍແລະຕ້ອງການພື້ນທີ່ໃນການເກັບມ້ຽນ
- ບົດຄວາມ/ວາລະສານທີ່ລ້າສະໄໝເມື່ອມີຮູບແບບອື່ນທີ່ງ່າຍແລະຕ້ອງການພື້ນທີ່ໃນການເກັບມ້ຽນ
- ປື້ມພາສາຕ່າງປະເທດເຊິ່ງຖືວ່າບໍ່ແມ່ນວັນນະກັມຫຼືບໍ່ມີຄຸນຄ່າຕໍ່ຂໍ້ມູນຂອງປະເທດຫຼືວັດທະນະທໍາ

- ເອກະສານອ້າງອີງທີ່ປ່ຽນແທນອຸປະກອນສິ່ງພິມຫ້ອງສະໝຸດ
- ພົດຈະນານຸກົມ, ເອກະສານປະກອບ, ຕາຕະລາງແລະຄູ່ມືທີ່ໄດ້ຮັບການປັບປຸງຢ່າງເປັນປົກກະຕິເຊິ່ງມີຂ່າວສານຂໍ້ມູນທີ່ມີປະໂຫຍດເມື່ອສະບັບປະຈຸບັນແລະສະບັບສຳຮອງບໍ່ຕ້ອງການຂໍ້ມູນປະຫວັດສາດ.
- ເນື້ອຫາຂອງອຸປະກອນສິ່ງພິມທີ່ປະຈຸບັນນີ້ສາມາດເຂົ້າເຖິງທາງອອນລາຍ
- ຕົ້ນສະບັບຂອງສິ່ງພິມທີ່ໄດ້ຮັບການດັດແກ້ເຊິ່ງບໍ່ສາມາດເຂົ້າເຖິງໄດ້ອີກ
- ອຸປະກອນສິ່ງພິມ (ລວມທັງ ສິ່ງພິມທີ່ເປັນມູນມໍລະດົກ) ເຊິ່ງໄດ້ຮັບການສຳເນົາໃນຮູບແບບອື່ນອາດຕ້ອງໄດ້ຖິ້ມຖ້າມີສະພາບຊຸດໂຊມຈົນເຖິງໃຊ້ການບໍ່ໄດ້
- ການຖອດຖອນປັດສະຈາກການຮັບຮູ້ຂອງຜູ້ບໍລິຈາກ

### ວິທີການກຳຈັດ

ສິ່ງພິມໄດ້ມາຈາກການບໍລິຈາກທີ່ຖືກຖອດຖອນຈະກັບໄປຫາຜູ້ບໍລິຈາກຖ້າຜູ້ບໍລິຈາກເປັນທີ່ຮູ້ຈັກແລະຫາກແມ່ນຄວາມຕ້ອງການທີ່ໄດ້ກ່າວໄວ້. ຖ້າທາງເລືອກນີ້ບໍ່ມີ, ອຸປະກອນທີ່ຖືກຖອດຖອນຈະຖືກມອບໃຫ້ແກ່ສະຖາບັນການເກັບສະສົມອື່ນໆທີ່ມີຄວາມສົນໃຈ, ຖ້າຫາກຄວາມສົນໃຈນີ້ສາມາດລະບຸໄດ້.

ອຸປະກອນສິ່ງພິມສ່ວນເກີນອື່ນໆອາດຖືກຂາຍໂດຍເງິນຈະນຳໄປໃຊ້ໃນການພັດທະນາການເກັບສະສົມແລະໂຄງການສຳຄັນອື່ນໆທີ່ກຳລັງດຳເນີນຢູ່.

## ການເກັບສະສົມທີ່ເປັນຮູບປະທຳ

ຫໍສະໝຸດແຫ່ງຊາດຮັກສາການເກັບສະສົມທີ່ເປັນຮູບປະທຳຂອງປຶ້ມໃນຂອບເຂດຫຼາຍພາສາ, ບົດຄວາມ, ວາລະສານ, ໜັງສືພິມ, ດົນຕີ, ເຄື່ອງດົນຕີ, ແຜນທີ່, ໜັງສືໃບລານແລະຜົນງານທີ່ຍັງບໍ່ໄດ້ຕີພິມ. ເນື່ອງຈາກການກໍ່ສ້າງທີ່ກຳລັງດຳເນີນໃນອາຄານປະຈຸບັນ, ຫໍສະໝຸດບໍ່ສາມາດເຮັດໃຫ້ການເກັບສະສົມເຫຼົ່ານີ້ໄປເຖິງມວນຊົນໄດ້. ຄາດວ່າການຍົກຍ້ານໄປອາຄານຫຼັງໃໝ່ໃນປີ 2016 ນີ້ຫໍສະມຸດຈະສາມາດນຳເອົາການເກັບສະສົມເຫຼົ່ານີ້ອອກຮັບໃຊ້ມວນຊົນ.

### ການເກັບສະສົມພາສາລາວ

ຫໍສະໝຸດມີການເກັບສະສົມຂະໜາດນ້ອຍຂອງປຶ້ມທີ່ເປັນພາສາລາວຍ້ອນປັດໃຈຫຼາຍຢ່າງ. ປັດໃຈເຫຼົ່ານີ້ກ່ຽວພັນກັບຂະ ແໜງການພິມໃນລາວຍັງມີຂະໜາດອ່າວນ້ອຍ, ການນຳສະເໜີກົດໝາຍວ່າດ້ວຍຫໍສະໝຸດຂອງລາວ (2012) ທີ່ກ່ຽວຂ້ອງກັບການມອບໂອນຢ່າງຖືກກົດໝາຍເມື່ອບໍ່ດົນມານີ້ ແລະ ການຂາດຫງົບປະມານການຊື້ທີ່ເໝາະສົມ.

ການພັດທະນາການເກັບສະສົມປຶ້ມທີ່ເປັນພາສາລາວແມ່ນໜຶ່ງໃນບູລິມະສິດສູງສຸດຂອງຫໍສະໝຸດ.

## ການເກັບສະສົມເອກະສານອ້າງອີງ

ປະຈຸບັນນີ້ຫໍສະໝຸດຮັກສາການເກັບສະສົມເອກະສານອ້າງອີງທັງໝົດຫຼາຍກວ່າ 5000 ງານຂຽນສະເພາະເລື່ອງແລະງານຂຽນທີ່ມີຫຼາຍຕອນ. ສິ່ງພິມເຫຼົ່ານີ້ສ່ວນໃຫຍ່ເປັນພາສາອັງກິດກັບຈຳນວນໜ້ອຍທີ່ສຸດທີ່ເປັນພາສາລາວ. ຄາດວ່າຈຳນວນປຶ້ມພາສາອັງກິດຈະຖືກຖອນອອກຈາກການເກັບສະສົມເນື່ອງຈາກອາຍຸການຂອງຂໍ້ມູນແລະການເຂົ້າເຖິງຂໍ້ມູນໄດ້ກາຍມາເປັນດິຈິຕໍຫຼາຍຂຶ້ນ.

## ການເກັບສະສົມພາສາຕ່າງເທດ

ເປົ້າໝາຍຂອງຫໍສະໝຸດແມ່ນເພື່ອເກັບສະສົມ, ເກັບຮັກສາ, ເຮັດແຄດຕາລ໊ອກແລະໃຫ້ການເຂົ້າເຖິງຕົວແທນວັນນະກຳພາສາຕ່າງປະເທດ. ປະຈຸບັນນີ້ຫໍສະໝຸດຍັງຮັກສາປຶ້ມທີ່ເປັນພາສາອັງກິດ, ຝຣັ່ງ, ໄທ, ຫວຽດນາມ, ເກົາຫຼີ, ຍີ່ປຸ່ນແລະລັດເຊຍ.

ຫໍສະໝຸດມີປະຫວັດໃນການຮັບການບໍລິຈາກປຶ້ມພາສາຕ່າງປະເທດໂດຍບໍ່ຄຳນຶງເຖິງຄວາມກ່ຽວຂ້ອງ, ຄຸນຄ່າດ້ານຂໍ້ມູນຫຼືມາດຕະຖານວັນນະກັມ. ສິ່ງນີ້ການເປັນສິ່ງບໍ່ຍືນຍົງ. ມີການຄາດຫວັງວ່າບາງເນື້ອໃນຂອງສິ່ງສະສົມນີ້ຈະຖືກຖອດຖອນຕາມການເວລາເພາະບໍ່ສອດຄ່ອງກັບແນວທາງການເລືອກເຟັ້ນທີ່ໄດ້ກຳນົດໄວ້ໃນນະໂຍບາຍນີ້.

ແຕ່ວ່າ ເມື່ອປະເທດຊາດມີຄວາມຈຳເປັນທີ່ຈະຕ້ອງຮຽນພາສາອັງກິດ, ປຶ້ມແລະແຫຼ່ງຂໍ້ມູນທີ່ເປັນພາສາອັງກິດຈະມີຄວາມຕ້ອງການຫຼາຍກວ່າພາສາອື່ນໆ. ນອກຈາກນັ້ນ, ໃນເມື່ອເປັນສະມາຊິກອາຊຽນ, ຫໍສະໝຸດຈະເລັ່ງໃສ່ການກໍ່ສ້າງການເກັບສະສົມຂໍ້ມູນແລະປຶ້ມວັນນະກັມກ່ຽວກັບປະເທດອາຊຽນອື່ນໆ.

## ການເກັບສະສົມໜັງສືພິມແລະບົດຂຽນດ້ານວິຊາການ

ຫໍສະໝຸດຮັກສາການສະສົມໜັງສືພິມ, ບົດຂຽນວິຊາການ, ວາລະສານທົ່ວໄປແລະວາລະສານທີ່ກຳນົດເວລາສະເພາະ ເຊິ່ງກຽມພ້ອມໃຫ້ແກ່ຜູ້ມາຢ້ຽມຢາມແລະສະມາຊິກຂອງຫໍສະໝຸດ. ສິ່ງນີ້ລວມທັງໜັງສືພິມລາຍວັນຂອງລາວແລະວາລະສານທຸກສະບັບກໍ່ຄືໜັງສືພິມສາກົນລາຍວັນແລະບົດຂຽນວິຊາການທີ່ເປັນພາສາອັງກິດ.

ຫໍສະໝຸດຍັງຄຸ້ມຄອງບໍລິຫານການເກັບຮັກສາໜັງສືພິມເປັນພາສາລາວເຊິ່ງພ້ອມທີ່ຂະຮັບໃຊ້ເພື່ອຈຸດປະສົງໃນການຄົ້ນຄ້ວາຂອງຜູ້ມາຊົມໃຊ້ອີກດ້ວຍ.

## ການເກັບສະສົມສຳລັບເດັກ

ໃນໄລຍະເວລາ 25 ປີທີ່ຜ່ານມາ ຫໍສະໝຸດໄດ້ເຮັດວຽກຢ່າງຫ້າວຫັນກັບຊຸມຊົນໂດຍຜ່ານໂຄງການ ການອ່ານ, ການເຫຼົ່ານິທານແລະໂຄງການສົ່ງເສີມການຮູ້ໜັງສືອື່ນໆເພື່ອສົ່ງເສີມການອ່ານໃຫ້ເດັກນ້ອຍລາວ.

ການເກັບສະສົມສຳລັບເດັກມີເປົ້າໝາຍເພື່ອສະໜອງບັນຍາກາດການຮຽນຮູ້ແບບສ້າງສັນເພື່ອໃຫ້ເດັກຄົ້ນພົບປຶ້ມ, ອ່ານເພື່ອຄວາມເພີດເພີນແລະມີສ່ວນຮ່ວມໃນກິດຈະກຳການຮູ້ໜັງສື. ນອກຈາກການເກັບສະສົມສຳລັບເດັກທີ່ຕັ້ງຢູ່ຫໍສະໝຸດແລ້ວ, ຫໍສະໝຸດຍັງສະໜອງການເຂົ້າເຖິງແຫຼ່ງຂໍ້ມູນການອ່ານໂດຍຜ່ານການບໍລິການຫໍສະໝຸດເຄື່ອນທີ່.

ຫໍສະໝຸດຍັງຮັກສາການເກັບສະສົມປຶ້ມອ່ານທີ່ມີຮູບພາບທີ່ເປັນພາສາລາວແລະປຶ້ມອ່ານທີ່ມີຮູບພາບຈາກຕ່າງປະເທດທີ່ເປັນພາສາອັງກິດ, ຝຣັ່ງ, ໄທແລະຍີ່ປຸ່ນ. ບູລິມະສິດສຳລັບຫໍສະຈະສືບຕໍ່ໃນການກໍ່ສ້າງການສະສົມທີ່ເປັນພາສາລາວສຳລັບເດັກແຕ່ກໍ່ເປີດກວ້າງໃນການຮັບເອົາການບໍລິຈາກປຶ້ມເດັກທີ່ເປັນພາສາອັງກິດ, ໂດຍສະເພາະແມ່ນພາສາອັງກິດ.

## ການເກັບສະສົມໜັງສືຜູກໃບລານ

ຫໍສະໝຸດແຫ່ງຊາດມີການເກັບສະສົມໜັງສືຜູກໃບລານຫຼາຍກວ່າ 1500 ສະບັບເຊິ່ງບາງສະບັບມີອາຍຸເກືອບ 500 ປີ. ໜັງສືຜູກນີ້ປາກົດໃນສີ່ປະເພດຕົວອັກສອນລວມທັງອັກສອນທັມແລະເກົ້າພາສາລວມທັງພາສາລາວແລະພາສາບາລີ. ໜັງສືຜູກນີ້ສະໜອງຂໍ້ມູນທີ່ໂດດເດັ່ນທາງດ້ານຄວາມຮູ້ດັ້ງເດີມຂອງລາວນັບແຕ່ກົດໝາຍ, ການແພດ, ປັດສະຍາແລະສາດສະໜາຈົນເຖິງນິທານພື້ນບ້ານ.

ການເຮັດໃຫ້ໜັງສືຜູກໃບລານກາຍເປັນດີຈີຕໍໄດ້ເລີ່ມຂຶ້ນແຕ່ປີ 2004 ເຊິ່ງໄດ້ຜະລິດຮູບພາບຫຼາຍກວ່າ 12000 ຮູບພາບທີ່ພ້ອມໃຫ້ຊົມໃຊ້ໃນພະແນກການເກັບສະສົມດ້ວຍລະບົບດີຈີຕໍໃນຫໍສະໝຸດແຫ່ງຊາດ.

## ການເກັບສະສົມດົນຕີພື້ນເມືອງ

ຫໍສະໝຸດແຫ່ງຊາດໄດ້ຈັດຕັ້ງ*ການເກັບມ້ຽນດົນຕີພື້ນເມືອງໃນລາວ (ATML)* ໃນປີ 1999. ໂຄງການນີ້ໄດ້ສ້າງການສະສົມຫຼາຍກວ່າ 3000 ການບັນທຶກສຽງ, ວີດີໂດເກືອບ 100 ເລື່ອງ ກໍ່ຄືຮູບພາບ, ບັນທຶກການສຳພາດ, ບົດບັນທຶກ, ຮູບແຕ້ມ, ເຄື່ອງດົນຕີແລະການສຳພາດຈາກຊາວຫ້າກຸ່ມຊົນເຜົ່າທີ່ແຕກຕ່າງກັນໃນທົ່ວປະເທດລາວ.

ນອກຈາກນັ້ນ ຫໍສະໝຸດຍັງຮັກສາການເກັບສະສົມແຜ່ນສຽງຫຼາຍກວ່າ 900 ແຜ່ນຈາກດົນຕີສາກົນຮ່ວມສະໄໝແລະຄຳປາໃສຈາກສາກົນໂດຍບຸກຄົນທີ່ມີຊື່ສຽງຈາກຍຸກລັດເຊຍແລະດົນຕີລາວຮ່ວມສະໄໝທີ່ໄດ້ຜ່ານການຄັດເລືອກທັງໃນຮູບແບບຂອງອານາລອກແລະດີຈີຕໍ.

## ການເກັບສະສົມປຶ້ມສະໄໝອິນດູຈີນທີ່ຫາຍາກ

ຫໍສະໝຸດແຫ່ງຊາດຍັງຮັກສາການເກັບສະສົມປຶ້ມຫາຍາກແລະບົດຄວາມທາງວິຊາການຈາກສະໄໝອິນດູຈີນຝຣັ່ງ (ປະມານປີ 1870 – 1954) ຫຼາຍກວ່າ 4000 ສະບັບ. ປຶ້ມແລະບົດຄວາມດ້ານວິຊາການເຫຼົ່ານີ້ສ່ວນຫຼາຍແມ່ນເປັນພາສາຝຣັ່ງແລະລວມມີຮູບຖ່າຍ, ຮູບພິມ ແລະ ຮູບແຕ້ມປະກອບ. ການເກັບສະສົມນີ້ສະໜອງຂໍ້ມູນທີ່ຫາຍາກແລະໂດດເດັ່ນຂອງຊີວິດໃນສະໄໝຫົວເມືອງຂຶ້ນ.

ຮູບແຕ້ມທີ່ໄດ້ຄັດເລືອກໄວ້ສາມາດຊົມໄດ້ໃນພະແນກຮູບພາບຂອງຫໍສະໝຸດເຊິ່ງຈະຖືກວາງສະແດງເມື່ອມີເນື້ອທີ່ພຽງພໍພ້ອມໃນຕຶກຫໍສະໝຸດຫຼັງໃໝ່.

### ການເກັບສະສົມແຜນທີ່

ຫໍສະໝຸດມີການເກັບສະສົມແຜນທີ່, ແຜນຜັງແລະແຜນອາດຫຼາຍກວ່າ 200 ສະບັບທີ່ກ່ຽວກັບລາວ, ເຂດແຂວງຕ່າງໆແລະຕົວເມືອງວຽງຈັນພ້ອມທັງຍ້ອນຫຼັງໄປສະໄໝຫົວເມືອງຂຶ້ນຝະຣັ່ງ (ກ່ອນປີ 1975).

ເນື່ອງຈາກວ່າປະຈຸບັນນີ້ເນື້ອທີ່ມີຈຳກັດ, ແຜນທີ່ເຫຼົ່ານີ້ຍັງບໍ່ໄດ້ອອກຮັບໃຊ້ມວນຊົນເທື່ອ.  ຄາດວ່າການຍົກຍ້າຍໄປຕຶກຫໍສະໝຸດຫຼັງໃໝ່ໃນປີ 2016 ນີ້ຈະອຳນວຍໃຫ້ແຜນທີ່ເຫຼົ່ານີ້ສາມາດຖືກວາງສະແດງໄດ້ຢ່າງຖາວອນ.

### ການເກັບສະສົມຂອງອາຊຽນ

ຫໍສະໝຸດແຫ່ງຊາດລາວໄດ້ສືບຕໍ່ສ້າງຍຸດທະສາດການພົວພັນກັບຫໍສະໝຸດໃນແຕ່ລະປະເທດອາຊຽນ.  ເປົ້າໝາຍແມ່ນເພື່ອກໍ່ສ້າງການເກັບສະສົມພິເສດຂອງອາຊຽນເພື່ອສະທ້ອນສາຍສຳພັນໄກ້ຄຽງດ້ານປະຫວັດສາດ, ວັດທະນະທຳ ແລະ ເສດຖະກິດກັບປະເທດອື່ນໆໃນປະຊາຄົມອາຊຽນ.

ຫໍສະໝຸດໄດ້ທ້ອນໂຮມເອົາການເກັບສະສົມປຶ້ມ 300 ຫົວທີ່ບໍລິຈາກໂດຍສະພາຫໍສະໝຸດສິງກະໂປເຊິ່ງສະແດງໃຫ້ເຫັນລັກສະນະຫຼາກຫຼາຍຂອງປະເທດສິງກະໂປເຊິ່ງຈະຖືກນຳອອກໂຊໃນອາຄານຫໍສະໝຸດຫຼັງໃໝ່ໃນປີ 2016.  ຫວັງວ່າການເກັບສະສົມພິເສດນີ້ຈະສະໜອງທັດສະນະມຸມມອງທີ່ແຕກຕ່າງດ້ານວັດທະນະທຳແລະປະຫວັດສາດຂອງຊາດອາຊຽນອື່ນໆ, ປົກປັກຮັກສາຄວາມເຂົ້າໃຈແລະການເຄົາລົບເຊິ່ງກັນແລະກັນ.

## ການເກັບສະສົມແບບດີຈີຕໍ

ຄືດັ່ງທີ່ກຳນົດໄວ້ໃນຈຸດປະສົງ 2, ຫໍສະໝຸດແຫ່ງຊາດມີເປົ້າໝາຍທີ່ຈະປັບປຸງການເຂົ້າເຖິງການເກັບສະສົມໂດຍຜ່ານ*ຫ້ອງສະໝຸດດີຈີຕໍ*

ໂດຍຜ່ານໂຄງການ*ລິເລີ່ມການເຂົ້າເຖິງຫໍສະໝຸດດີຈີຕໍ* (*DLAI*) ຫໍສະໝຸດແຫ່ງຊາດຈະສ້າງເຄືອຄ່າຍເພື່ອສະໜອງການເຂົ້າເຖິງການເກັບສະສົມແລະການບໍລິການແບບອອນລາຍຂອງຫໍສະໝຸດ.  ມັນເປັນສ່ວນສຳຄັນຂອງຄວາມພະຍາຍາມຂອງ ຫສຊ ເພື່ອກໍ່ສ້າງຫໍສະໝຸດດີຈີຕໍທີ່ຈະເຮັດໃຫ້ຂໍ້ມູນຂ່າວສານກຽມພ້ອມໄດ້ຕະຫຼອດເວລາເພື່ອຜົນປະໂຫຍດຂອງທຸກໆຊຸມຊົນໃນລາວ. ເວັບໄຊ້ຈະພໍໃຫ້ຊົມໃຊ້ທັງພາສາລາວແລະອັງກິດ.

ໄລຍະທີໜຶ່ງຂອງໂຄງການຈະສະໜອງການເຂົ້າເຖິງໃຫ້:

- ການເກັບສະສົມແບບດີຈີຕໍຂອງໜັງສືຜູກໃບລານຂອງ ຫສຊ http://www.laomanuscripts.net/en/index
- ການເກັບສະສົມແບບດີຈີຕໍຂອງດົນຕີພື້ນເມືອງລາວຂອງ ຫສຊ  http://www.seasite.niu.edu/lao/
- ການເກັບສະສົມແບບດີຈີຕໍຂອງຮູບພາບສະໄໝອິນດູຈີນຝຣັ່ງ ຂອງ ຫສຊ

ໄລຍະທີສອງຂອງໂຄງການທີ່ຈະເສີມຂະຫຍາຍລວມມີ:

- ແຄຕາລັອກການເປີດການເຂົ້າເຖິງຂອງ (ແຄຕາລັອກຂອງຫໍສະໝຸດ)
- ການເຊື່ອມຕໍ່ເຂົ້າໄປບັນນານຸກົມຂອງ ຫສຊ http://kawinphong.com/show_data/
- ຖານຂໍ້ມູນສໍາລັບການຄົ້ນຄວ້າດ້ານການສຶກສາ, ເສດຖະກິດ, ສາທາລະນະສຸກແລະກະສິກໍາ (ລວມມີ HINARI, AGORA, OARE and ARDI) http://www.research4life.org/
- ພົດຈະນານຸກົມ ລາວ-ອັງກິດ http://dict.nafri.org.la/
- ການເຊື່ອມຕໍ່ເຂົ້າໄປໃນການເກັບສະສົມຂອງຫໍສະໝຸດແຫ່ງຊາດອາຊຽນ
- ການເຊື່ອມຕໍ່ເຂົ້າແຫຼ່ງຂໍ້ມູນຂອງລາວໃນຫ້ອງສະໝຸດບ່ອນອື່ນແລະສະຖາບັນຂໍ້ມູນຂ່າວສານ https://wayback.archive-it.org/1054/*/http://inlao.com.la/
- ການເຊື່ອມຕໍ່ເຂົ້າຫາຄູ່ຮ່ວມງານແລະພາກສ່ວນກ່ຽວຂ້ອງ http://www.ifla.org/
- ການເຊື່ອມຕໍ່ເຂົ້າຫາແຫຼ່ງຂໍ້ມູນອອນລາຍ ປະກອບມີ ອີເຈີນໍ, ຖານຂໍ້ມູນ, ອີບຸກ, ອີເລີນນິ້ງ

## ຫໍສະໝຸດດີຈີຕໍຂອງໜັງສືຜູກໃບລານເປັນພາສາລາວ - DLLM

ຫໍສະໝຸດດີຈີຕໍຂອງໜັງສືຜູກໃບລານສະໜອງການເຂົ້າເຖິງບົດຄວາມຈາກໜັງສືຜູກໃບລານຫຼາຍກວ່າ12000 ບົດທີ່ວປະເທດລາວ. ຖານຂໍ້ມູນນີ້ສາມາດຄົ້ນພົບໄດ້ໂດຍຫົວຂໍ້, ຄໍາສັບທີ່ກ່ຽວຂ້ອງ, ເນື້ອເລື່ອງ, ປະເພດ, ສິ່ງພິມ,ສະຖານທີ່ຕັ້ງ, ວັນທີແລະເລກລະຫັດ.

DLLM ຍັງສະໜອງຂໍ້ມູນກ່ຽວກັບປະເພນີວັດທະນະທໍາ, ໂຄງການເກັບຮັກສາໜັງສືຜູກໃບລານລາວ, ແຫ່ງການຮຽນແລະຫ້ອງວາງສະແດງຮູບພາບທີ່ສະແດງໃຫ້ເຫັນການເກັບຮັກສາໜັງສືຜູກໃບລານ.ການເກັນຮັກສາສາມາດເບິ່ງ http://www.laomanuscripts.net/en/about/project

## ດົນຕີພື້ນເມືອງ

ການເກັບສະສົມດົນຕີພື້ນເມືອງຂອງຫໍສະໝຸດຈະພ້ອມນໍາໃຊ້ທາງອອນລາຍໃນເວັບຂອງຫໍສະໝຸດເອງ ເຊິ່ງເປັນສ່ວນໜຶ່ງຂອງໂຄງການ DLAI

ປະຈຸບັນນີ້, ການເລືອກເຟັ້ນດົນຕີຈາກ ການເກັບມ້ຽນດົນຕີພື້ນເມືອງໃນລາວ http://www.seasite.niu.edu/lao/culture/traditional_music/music_collection.htm

## ປື້ມອິນໂດຈີນທີ່ຫາຍາກ

ສ່ວນໜຶ່ງຂອງໂຄງການທີ່ກໍາລັງດໍາເນີນຢູ່ຂອງການເກັບຮັກສາແລະການເຮັດໃຫ້ເປັນດີຈີຕໍ, ຫໍສະໝຸດແຫ່ງຊາດມີຕາຕະລາງສໍາລັບການອານຸລັກແລະການສະແກນປື້ມທຸກຫົວແລະບົດຄວາມທຸກສະບັບໃນການເກັບສະສົມ.

ການຄັດເຟັ້ນຮູບແຕ້ມຈາກປຶ້ມແລະບົດຄວາມເຫຼົ່ານີ້ຈະມີຢູ່ໃນລະບົບອອນລາຍເຊິ່ງເປັນສ່ວນໜຶ່ງຂອງໂຄງການ*ລິເລີ່ມການເຂົ້າເຖິງຫໍສະໝຸດດ້ວຍລະບົບດີຈີຕໍ* (*DLAI*).

## ບູລິມະສິດຂອງການເກັບສະສົມໃນອານາຄົດ

ຫໍສະໝຸດແຫ່ງຊາດຈະຖືກຍົກຍ້າຍໄປອາຄານຫຼັງໃໝ່ໃນປີ 2016 ນີ້. ຂະໜາດແລະຮູບຮ່າງຂອງອາຄານຫໍສະໝຸດຫຼັງໃໝ່ຈຳນຳສະເໜີໂອກາດທີ່ເໝາະສົມສຳລັບຫໍສະໝຸດໃນການເສີມຂະຫຍາຍການສະສົມໃຫ້ກວມເອົາລາຍການທີ່ຫໍສະໝຸດຍັງບໍ່ໄດ້ຢູ່ໃນຖານະທີ່ຈະຄົ້ນຫາ, ເກັບຮັກສາຫຼືວາງສະແດງ.

ນອກຈາກນັ້ນ, ນະໂຍບາຍການພັດທະນາການເກັບສະສົມນີ້ໄດ້ສະໜອງໂອກາດໃຫ້ ຫສຊ ໃນການຈຳແນກຊ່ອງຫວ່າງໃນການເກັບສະສົມຂອງຫໍສະໝຸດແຫ່ງຊາດ. ເພື່ອຈະໃຫ້ ຫສຊ ບັນລຸຈຸດປະສົງຍຸດທະສາດແລະໄດ້ຮັບການຮັບຮູ້ໃນຖານະເປັນສະຖາບັນແຫ່ງຄວາມຊົງຈຳທີ່ສຳຄັນທີ່ສຸດຂອງປະເທດ, ຫໍສະມຸດໄດ້ສືບຕໍ່ໄຝ່ຫາໂອກາດໃນການສ້າງການເກັບສະສົມທັງທາງຮູບປະພັນແລະດີຈີຕໍໃນຂອບເຂດດັ່ງລຸ່ມນີ້:

- ຮູບ - ຮູບປະກອບ, ຮູບຖ່າຍ, ຮູບພິມ ແລະ ຈິດຕະກຳ ທີ່ສະທ້ອນປະຫວັດສາດ, ຄວາມຫຼາກຫຼາຍຂອງຊົນຊາດຊົນເຜົ່າ, ວັດທະນະທຳປະເພນີແລະສັງຄົມຂອງລາວ.
- ການເລົ່າປະຫວັດຄວາມເປັນມາແລະນິທານພື້ນບ້ານ - ການບັກທຶກສຽງແລະການບັນທຶກສຽງແລະພາບທີ່ເລັງໃສ່ຄວາມຮູ້ແບບດັ້ງເດີມໃນຊຸມຊົນພື້ນເມືອງລາວ.
- ຜົນງານຕົ້ນສະບັບແລະຜົນງານທີ່ບໍ່ເຄີຍຕີພິມມາກ່ອນ - ເຊິ່ງກ່ຽວຂ້ອງກັບເຫດການທີ່ສາຄັນຫຼືບຸກຄົນສາຄັນໃນປະຫວັດສາດລາວ.
- ລວມມີ ອີບຸກ, ບົດຄວາມດ້ານວິຊາການ, ຖານຂໍ້ມູນ ແລະ ແຫຼ່ງຂໍ້ມູນອື່ນໆເພື່ອປັບປຸງການເຂົ້າເຖິງຂໍ້ມູນຂ່າວສານແລະສົ່ງເສີມການຮຽນຮູ້ຕະຫຼອດຊີວິດ.

## ຄວາມເປັນມາຂອງເອກະສານແລະການຄຸ້ມຄອງ

| W\ L]_ | V]KJ aGZ]_ZYC | Z]_ZYCkGF | B©Y\ J L^FkGFX Fp |
|---|---|---|---|
| K\ kFL^FP]GJ \ K^ @^Ki @]_W\ WRAYC X WE-o | ພະຈິກ 2015 | ທ່ານ ນາງ ຂັນທະມາລີ ຍັງນູວົງ ຜູ້ອຳນວຍການ ຫໍສະໝຸດແຫ່ງຊາດ ລາວ ນະຄອນຫຼວງວຽງຈັນ | ນະໂຍບາຍພັດທະນາການເກັບສະສົມຂອງ ຫສຊ ສະບັບທີ 1. ໂດຍອີງໃສ່ແຜນການຍົກຍ້າຍໄປອາຄານຫໍສະໝຸດຫຼັງໃໝ່ໃນປີ 2016. |
| | | | |